ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===----------

ກະຊວງການຄ້າ

ເລກທີ 0948/ກຄ.ຕປທ

ວຽງຈັນ, ວັນທີ 13/8/2001

# ຂໍ້ກຳນົດ
# ວ່າດ້ວຍທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ

- ອີງຕາມ ລະບຽບ, ກົດໝາຍຕ່າງໆທີ່ກ່ຽວຂ້ອງຂອງ ສປປ ລາວ;
- ອີງຕາມດຳລັດເລກທີ 24/ນຍ, ລົງວັນທີ 24/03/99 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການຄ້າ.

ລັດຖະມົນຕີວ່າການກະຊວງການຄ້າອອກຂໍ້ກຳນົດ:

## ໝວດທີ I
## ຫລັກການທົ່ວໄປ

### ມາດຕາ 1. ວັດຖຸປະສົງຂອງຂໍ້ກຳນົດ

ຂໍ້ກຳນົດສະບັບນີ້ວາງອອກ ເພື່ອສົ່ງເສີມການຜະລິດຂະໜາດນ້ອຍ ແລະ ຄຸ້ມຄອງການຄ້າຊາຍຕາມຊາຍແດນໃຫ້ເຄື່ອນໄຫວຢ່າງມີການຈັດຕັ້ງ, ສອດຄ່ອງກັບແຜນການພັດທະນາເສດຖະກິດການຄ້າ, ລະບຽບ, ກົດໝາຍຕ່າງໆ ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ສ້າງວຽກເຮັດງານທຳ ແລະ ລາຍໄດ້, ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໃນເຂດຊາຍແດນຫ່າງໄກສອກຫລີກໃຫ້ນັບມື້ນັບດີຂຶ້ນ.

### ມາດຕາ 2. ທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ

ທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນແມ່ນທຸລະກິດຜະລິດ ແລະ ເກັບຊື້ສິນຄ້າ ເພື່ອສົ່ງອອກຂະໜາດນ້ອຍຕາມຈຸດຊາຍແດນຂອງປະຊາຊົນ, ຫົວໜ່ວຍ ເສດຖະກິດຄອບຄົວ ແລະ ທຸລະກິດຮ່ວມມືຜະລິດສິນຄ້າຊາຍແດນ.

ທຸລະກິດຮ່ວມນີ້ຜະລິດສິນຄ້າຊາຍແດນແມ່ນການຜະລິດຂະໜາດນ້ອຍຢູ່ຊາຍແດນເບື້ອງລາວ (ໃນຖານະຜູ້ສົ່ງອອກ) ໂດຍຮ່ວມມືກັບປະຊາຊົນ ຫລື ຫົວໜ່ວຍທຸລະກິດຂອງປະເທດໃກ້ຄຽງ (ໃນຖານະຜູ້ສະໜອງແນວພັນ ຫລື ວັດຖຸດິບທັງເປັນຜູ້ນໍາເຂົ້າຜະລິດຕະພັນ, ສິນຄ້າຈາກການຜະລິດດັ່ງກ່າວ).

ທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ ສາມາດນໍາເຂົ້າບາງປະເພດສິນຄ້າທີ່ຈໍາເປັນ ສໍາລັບແກ້ໄຂຊີວິດການເປັນຢູ່ ແລະ ການຜະລິດຕາມເງື່ອນໄຂທີ່ບົ່ງໄວ້ໃນຂໍ້ກໍານົດສະບັບນີ້ເທົ່ານັ້ນ.

### ມາດຕາ 3. ພື້ນຖານລະບຽບການຂອງການດໍາເນີນທຸລະກິດ

ທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ ຕ້ອງດໍາເນີນບົນພື້ນຖານການປະຕິບັດ ຢ່າງເຂັ້ມງວດຕາມລະບຽບການທີ່ໄດ້ບົ່ງໄວ້ໃນຂໍ້ກໍານົດສະບັບນີ້ ແລະ ລະບຽບ, ກົດໝາຍອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ II
## ເງື່ອນໄຂ ແລະ ການຈັດຕັ້ງທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ

### ມາດຕາ 4. ເງື່ອນໄຂຂອງການດໍາເນີນທຸລະກິດ

ຜູ້ທີ່ສາມາດດໍາເນີນທຸລະກິດສົ່ງອອກສິນຄ້າຂະໜາດນ້ອຍ ແລະ ນໍາເຂົ້າບາງປະເທດສິນຄ້າ ຕາມຈຸດຊາຍແດນຈະຕ້ອງເຂົ້າເປັນສະມາຊິກຂອງກຸ່ມທຸລະກິດ ທີ່ເອີ້ນຫຍໍ້ວ່າ “ກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ”.

### ມາດຕາ 5. ການຈັດຕັ້ງກຸ່ມ

ກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນແມ່ນການຈັດຕັ້ງໜຶ່ງຂອງຜູ້ຜະລິດ ແລະ ຜູ້ເກັບຊື້ສິນຄ້າ ເພື່ອສົ່ງອອກຂະໜາດນ້ອຍຕາມຈຸດຊາຍແດນລາວກັບປະເທດໃກ້ຄຽງກຸ່ມທຸລະກິດດັ່ງກ່າວຈະຕ້ອງສ້າງຕັ້ງ ແລະ ເຄື່ອນໄຫວຕາມເງື່ອນໄຂ ແລະ ລະບຽບການຂອງຂໍ້ກໍານົດ ເລກທີ 0834/ກຄ.ພນ, ລົງວັນທີ 13/7/2001 ວ່າດ້ວຍສະມາຄົມ ຫລື ກຸ່ມທຸລະກິດການຄ້າ.

### ມາດຕາ 6. ສະມາຊິກຂອງກຸ່ມ

ສະມາຊິກຂອງກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ ອາດຈະປະກອບດ້ວຍສອງລັກສະນະຄື: ສະມາຊິກທີ່ມີພື້ນຖານການຜະລິດໃດໜຶ່ງເປັນຂອງຕົນເອງ ແລະ ສະມາຊິກທີ່ບໍ່ມີພື້ນຖານການຜະລິດເປັນຕົນເອງ, ໃນນີ້:

- ສະມາຊິກທີ່ມີພື້ນຖານການຜະລິດເປັນຂອງຕົນເອງອາດຈະມີທະບຽນວິສາຫະກິດກ່ຽວກັບທຸລະກິດຈຳໜ່າຍສິນຄ້າພາຍໃນ ຫລື ບໍ່ກໍໄດ້, ໃນກໍລະນີບໍ່ມີທະບຽນວິສາຫະກິດດັ່ງກ່າວ ກ່ອນຈະສະໝັກເປັນສະມາຊິກຂອງກຸ່ມຜູ້ກ່ຽວຕ້ອງແຈ້ງໃຫ້ຫ້ອງການ ການຄ້າເມືອງຊາບ ແລະ ຕົກລົງກ່ອນ.
- ສະມາຊິກທີ່ບໍ່ມີພື້ນຖານການຜະລິດເປັນຂອງຕົນເອງຈະຕ້ອງມີທະບຽນວິສາຫະກິດກ່ຽວກັບທຸລະກິດຈຳໜ່າຍສິນຄ້າພາຍໃນ.

ຜະລິດຕະພັນ, ສິນຄ້າທີ່ສະມາຊິກສົ່ງອອກ ອາດຈະໄດ້ມາຈາກການຜະລິດຂອງຕົນເອງ ຫລື ເກັບຊື້ຈາກແຫລ່ງຜະລິດຕ່າງໆ ຫລື ຈາກຕະຫລາດພາຍໃນກໍໄດ້.

## ໝວດທີ III
## ລະບຽບການສົ່ງອອກ ແລະ ນຳເຂົ້າສິນຄ້າຊາຍແດນ

### ມາດຕາ 7. ລະບຽບການທົ່ວໄປ

ຜະລິດຕະພັນ, ສິນຄ້າທີ່ສົ່ງອອກ ແລະ ນຳເຂົ້າຕາມຊາຍແດນຕ້ອງຜ່ານ “ຈຸດຊາຍແດນ” ທີ່ໄດ້ຮັບອະນຸຍາດຈາກອຳນາດການປົກຄອງທ້ອງຖິ່ນແຂວງ, ນະຄອນຫລວງ ແລະ ເຂດພິເສດ ແລະ ຕ້ອງເສັຍພາສີ, ອາກອນຕາມລະບຽບການທີ່ກ່ຽວຂ້ອງຂອງຂະແໜງການເງິນ, ເວັ້ນເສັຍແຕ່ຈຸດຊາຍແດນທີ່ຖືກກຳນົດໃຫ້ເປັນເຂດຢ່າງໃດຢ່າງໜຶ່ງເຊັ່ນ: ຕະຫລາດຊາຍແດນຊຶ່ງມີລະບຽບການກຳນົດໄວ້ເປັນຢ່າງອື່ນ.

ການນຳເຂົ້າ ຫລື ສົ່ງອອກສິນຄ້າຊາຍແດນ ຜ່ານດ່ານລະດັບປະເທດແມ່ນເກືອດຫ້າມ, ໃນກໍລະນີຫາກເປັນເຄື່ອງຂອງຕິດຕົວຕ້ອງປະຕິບັດບົດບັນຍັດຂອງກົດໝາຍພາສີ.

ທຸກປະເພດຜະລິດຕະພັນ, ສິນຄ້າຊາຍແດນທີ່ນຳເຂົ້າມາແມ່ນ ແນໃສ່ຮັບໃຊ້ການຜະລິດພາຍໃນ ແລະ ແກ້ໄຂຊີວິດການເປັນຢູ່ອັນຈຳເປັນເທົ່ານັ້ນຊຶ່ງຈະໄດ້ມີການກຳນົດລາຍການສິນຄ້າຈາກກະຊວງການຄ້າ.

### ມາດຕາ 8. ຈຸດຊາຍແດນ

ຈຸດຊາຍແດນປະກອບດ້ວຍ 2 ປະເພດຄື: ຈຸດຊາຍແດນທີ່ຕັ້ງຢູ່ໃນເຂດຫ່າງໄກສອກຫລີກ ແລະ ຈຸດຊາຍແດນທີ່ບໍ່ຕັ້ງຢູ່ໃນເຂດຫ່າງໄກສອກຫລີກ, ໃນນີ້:

- ບັນດາສະມາຊິກຂອງກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຂອງຕົນໃນຈຸດຊາຍແດນທີ່ຕັ້ງຢູ່ເຂດຫ່າງໄກສອກ ຫລີກສາມາດສົ່ງອອກ ແລະ ນຳເຂົ້າສິນຄ້າຮັບໃຊ້ການຜະລິດ ແລະ ຮັບໃຊ້ຊີວິດການເປັນຢູ່ອັນຈຳເປັນຂອງຕົນຕາມລາຍການທີ່ອະນຸຍາດໃຫ້ໃນແຕ່ລະໄລຍະ.

– ບັນດາສະມາຊິກຂອງກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຂອງຕົນ ໃນຈຸດຊາຍແດນທີ່ບໍ່ຕັ້ງຢູ່ຫ່າງໄກສອກຫລີກສາມາດສົ່ງຜະລິດຕະພັນ, ສິນຄ້າ ແລະ ນຳເຂົ້າສິນຄ້າຮັບໃຊ້ການຜະລິດຂອງຕົນ, ສ່ວນປະເພດສິນຄ້າຮັບໃຊ້ຊີວິດການເປັນຢູ່ທົ່ວໄປຕ້ອງຊື້ຢູ່ຕະຫລາດພາຍໃນເທົ່ານັ້ນ.

**ມາດຕາ 9. ເຂດຊາຍແດນຫ່າງໄກສອກຫລີກ**

ເຂດຊາຍແດນຫ່າງໄກສອກຫລີກຈະຕ້ອງແມ່ນເຂດທີ່ປະກອບຄົບຕາມສອງເງື່ອນໄຂລຸ່ມນີ້:

– ຈະຕ້ອງເປັນເຂດທີ່ເຂົ້າສູ່ຕະຫລາດພາຍໃນບໍ່ໄດ້ ຫລື ໄດ້ຍາກອັນເນື່ອງມາຈາກ ຄວາມຫ່າງໄກ, ທຸລະກັນດານດັ່ງນີ້ເປັນຕົ້ນຄຳວ່າ "ຕະຫລາດ" ໃນທີ່ນີ້ລວມຄວາມໝາຍໄປເຖິງຕາໜ່າງຮ້ານຄ້າຂາຍຍ່ອຍລະດັບຕ່າງໆທີ່ບໍລິການສິນຄ້າຢູ່ແຕ່ລະບ່ອນ.
– ເປັນເຂດທີ່ຫົວໜ່ວຍທຸລະກິດພາຍໃນບໍ່ສາມາດສະໜອງສິນຄ້າໃຫ້ໄດ້ ຫລື ຕອບສະໜອງໄດ້ພຽງແຕ່ເລັກໜ້ອຍຊຶ່ງບໍ່ສາມາດແກ້ໄຂຄວາມຂາດເຂີນອັນເປັນພື້ນຖານຂອງທ້ອງຖິ່ນນັ້ນໄດ້ເທື່ອ.

ການກຳນົດລະອຽດກ່ຽວກັບ ເຂດຊາຍແດນຫ່າງໄກສອກຫລີກ, ມອບໃຫ້ພະແນກການຄ້າແຂວງ, ນະຄອນຫລວງ ແລະ ເຂດພິເສດເປັນເຈົ້າການປະສານກັບ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງພິຈາລະນາແລ້ວລາຍງານໃຫ້ກະຊວງຊາບ ແລະ ຕິດຕາມ, ຊີ້ນຳໃນແຕ່ລະໄລຍະ.

**ມາດຕາ 10. ຜະລິດຕະພັນ, ສິນຄ້າຊາຍແດນສົ່ງອອກ**

ຜະລິດຕະພັນ, ສິນຄ້າຊາຍແດນສົ່ງອອກປະກອບດ້ວຍທຸລະກິດປະເພດສິນຄ້າ, ເວັ້ນເສັຍແຕ່ປະເພດສິນຄ້າທີ່ເກືອດຫ້າມ ຫລື ກຳນົດເງື່ອນໄຂການຄວບຄຸມການສົ່ງອອກໄວ້ເປັນຢ່າງອື່ນ.

**ມາດຕາ 11. ຜະລິດຕະພັນ, ສິນຄ້າຊາຍແດນນຳເຂົ້າ**

ປະເພດຜະລິດຕະພັນ, ສິນຄ້າຊາຍແດນທີ່ຈະນຳເຂົ້າໄດ້ກໍຕໍ່ເມື່ອ:

– ສອດຄ່ອງກັບເງື່ອນໄຂທີ່ໄດ້ບົ່ງໄວ້ໃນມາດຕາ 08 ຂອງຂໍ້ກຳນົດສະບັບນີ້.
– ສອດຄ່ອງກັບປະເພດຜະລິດຕະພັນ, ສິນຄ້າທີ່ກຳນົດໃຫ້ນຳເຂົ້າໄດ້ ສະເພາະໃນແຕ່ລະຈຸດຊາຍແດນ. ມອບໃຫ້ພະແນກການຄ້າແຂວງ, ນະຄອນຫລວງ ແລະ ເຂດພິເສດປະສານກັບອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອກຳນົດລາຍລະອຽດກ່ຽວກັບປະເພດສິນຄ້າດັ່ງກ່າວໃນແຕ່ລະໄລຍະນອນຢູ່ໃນຂອບເຂດມູນຄ່າຂອງແຜນດຸ່ນດ່ຽງ ສິນຄ້າທີ່ໄດ້ອະນຸຍາດໃຫ້ທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນໃນແຕ່ລະປີ.

- ສອດຄ່ອງກັບບັນຊີລາຍການສິນຄ້າລວມທີ່ກະຊວງການຄ້າອະນຸຍາດໃຫ້ທຸລະກິດສົ່ງອອກຂະໜາດ ນ້ອຍຊາຍແດນນໍາເຂົ້າ. ມອບໃຫ້ກົມການຄ້າຕ່າງປະເທດຄົ້ນຄວ້າບັນຊີສິນຄ້າດັ່ງກ່າວ.

**ມາດຕາ 12. ແຜນດຸ່ນດ່ຽງສິນຄ້າຊາຍແດນ**

ການມອບແຜນດຸ່ນດ່ຽງສິນຄ້າຊາຍແດນໃຫ້ແຕ່ລະກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນແມ່ນ ມອບເປັນມູນຄ່າລວມເພື່ອນໍາເຂົ້າໃນແຕ່ລະປີໂດຍບໍ່ກໍານົດມູນຄ່າສົ່ງອອກ, ແຕ່ການນໍາເຂົ້າຕົວຈິງຈະຕ້ອງ ປະຕິບັດຢ່າງເຂັ້ມງວດຕາມເງື່ອນໄຂລຸ່ມນີ້:

- ເງື່ອນໄຂຕາມທີ່ໄດ້ບົ່ງໄວ້ໃນມາດຕາ 08 ແລະ ມາດຕາ 11 ຂອງຂໍ້ກໍານົດສະບັບນີ້.
- ມູນຄ່ານໍາເຂົ້າສໍາລັບຮັບໃຊ້ຊີວິດການເປັນຢູ່ ອັນຈໍາເປັນຕ້ອງບໍ່ເກີນມູນຄ່າສົ່ງອອກ, ເມື່ອສະຫລຸບ ທ້າຍບັນຊີທ້າຍປີ (ປີການບັນຊີວິສາຫະກິດ).

ສໍາລັບການນໍາເຂົ້າບາງປະເພດສິນຄ້າຮັບໃຊ້ການຜະລິດເຊັ່ນ: ວັດຖຸດິບ ຫລື ແນວພັນ, ບໍ່ຈໍາເປັນຈະ ຕ້ອງໄລ່ລຽງກັບສັດສ່ວນມູນຄ່າສົ່ງອອກກໍໄດ້. ໃນກໍລະນີຈໍາເປັນໃຫ້ສາມາດນໍາເຂົ້າມາແຕ່ຕ້ອງຂໍອະນຸຍາດ ນໍາເຂົ້າຈາກຫ້ອງການການຄ້າເມືອງກ່ອນ.

ມູນຄ່ານໍາເຂົ້າກໍານົດໃນແຜນດຸ່ນດ່ຽງສິນຄ້າຊາຍແດນ ທີ່ມອບໃຫ້ແຕ່ລະກຸ່ມທຸລະກິດສົ່ງອອກຂະໜາດ ນ້ອຍຊາຍແດນ ຕ້ອງນອນໃນຂອບເຂດແຜນດຸ່ນດ່ຽງສິນຄ້າລວມ ທີ່ກະຊວງການຄ້າໄດ້ມອບໃຫ້ແຕ່ລະ ທ້ອງຖິ່ນຈັດຕັ້ງປະຕິບັດໃນແຕ່ລະປີ, ເວັ້ນເສັຍແຕ່ບາງກໍລະນີທີ່ບົ່ງໄວ້ໃນມາດຕານີ້.

ມອບໃຫ້ພະແນກການຄ້າແຂວງ, ນະຄອນຫລວງ ແລະ ເຂດພິເສດເປັນຜູ້ແບ່ງປັນ, ມອບແຜນດຸ່ນ ດ່ຽງສິນຄ້າຊາຍແດນ ແລະ ຊີ້ນໍາລວມຕໍ່ກຸ່ມທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນ ແລະ ຫ້ອງການ ການຄ້າເມືອງເປັນຜູ້ຄຸ້ມຄອງໂດຍກົງຕໍ່ການຈັດຕັ້ງປະຕິບັດແຜນດຸ່ນດ່ຽງ ແລະ ການເຄື່ອນໄຫວຂອງກຸ່ມ ດັ່ງກ່າວໃນຂອບເຂດທີ່ຕົນຮັບຜິດຊອບ.

**ມາດຕາ 13. ຂັ້ນຕອນການສົ່ງອອກ ແລະ ນໍາເຂົ້າສິນຄ້າຕາມຊາຍແດນ**

ການສົ່ງອອກ ແລະ ນໍາເຂົ້າສິນຄ້າຊາຍແດນຈະຕ້ອງປະຕິບັດຢູ່ບົນພື້ນຖານລະບຽບການ ແລະ ຂັ້ນ ຕອນທີ່ວ່ອງໄວ ແລະ ງ່າຍດາຍທີ່ສຸດ, ໃນນີ້:

- ສໍາລັບການສົ່ງອອກແມ່ນໃຫ້ນໍາສິນຄ້າສົ່ງອອກໄປແຈ້ງໂດຍກົງຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢູ່ໃນຈຸດ ຊາຍແດນກ່ຽວກັບຈໍານວນ, ປະເພດ ແລະ ມູ່ນຄ່າຂອງສິນຄ້າເພື່ອເກັບກໍາສະຖິຕິ ແລະ ກວດກາ ຄວາມຖືກຕ້ອງດ້ານອື່ນໆຂອງສິນຄ້າສົ່ງອອກຕາມທີ່ໄດ້ບົ່ງໄວ້ໃນຂໍ້ກໍານົດສະບັບນີ້.

- ສໍາລັບສິນຄ້ານໍາເຂົ້າ, ກ່ອນການນໍາເຂົ້າ ຈະຕ້ອງປະກອບເອກະສານນໍາເຂົ້າທີ່ເອີ້ນວ່າ “ໃບຕິດຕາມສິນຄ້ານໍາເຂົ້າຊາຍແດນ” ແລ້ວໄປແຈ້ງໂດຍກົງຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢູ່ຈຸດຊາຍແດນເພື່ອເກັບກໍາສະຖິຕິ ແລະ ຄຸ້ມຄອງການນໍາເຂົ້າ ຕາມເງື່ອນໄຂທີ່ບົ່ງໄວ້ໃນ ມາດຕາ 11 ຂອງຂໍ້ກໍານົດສະບັບນີ້.

ໃບຕິດຕາມສິນຄ້ານໍາເຂົ້າຊາຍແດນ ຈະຕ້ອງເປັນແບບຟອມທີ່ງ່າຍດາຍ. ມອບໃຫ້ກົມການຄ້າຕ່າງປະເທດເປັນຜູ້ຄົ້ນຄວ້າແບບຟອມລະອຽດ.

## ໝວດທີ IV
## ມາດຕະການຕໍ່ຜູ້ລະເມີດ ແລະ ການຈັດຕັ້ງປະຕິບັດ

### ມາດຕາ 14. ມາດຕະການຕໍ່ຜູ້ລະເມີດ

ທຸກການກະທໍາທີ່ເປັນການລະເມີດຕໍ່ຂໍ້ກໍານົດສະບັບນີ້, ນອກຈາກຈະຖືກຫ້າມບໍ່ໃຫ້ເຄື່ອນໄຫວທຸລະກິດສົ່ງອອກຂະໜາດນ້ອຍຊາຍແດນແລ້ວ ຍັງຈະຖືກດໍາເນີນຄະດີຕາມສະຖານະການກະທໍາຜິດ ຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 15. ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າຕ່າງປະເທດເປັນເຈົ້າການປະສານກັບກົມ, ພະແນກການຄ້າ, ຫ້ອງການການຄ້າ ແລະ ພາກສ່ວນໆທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ກໍານົດສະບັບນີ້ໃຫ້ມີປະສິດທິຜົນ.

### ມາດຕາ 16. ການປ່ຽນແທນຂໍ້ກໍານົດເກົ່າ

ຂໍ້ກໍານົດສະບັບນີ້ປ່ຽນແທນຂໍ້ກໍານົດ (ຊົ່ວຄາວ) ເລກທີ 465/ກຄທ, ລົງວັນທີ 8/12/1993 ວ່າດ້ວຍທຸລະກິດການຄ້າຊາຍແດນ.

### ມາດຕາ 17. ຜົນສັກສິດ

ຂໍ້ກໍານົດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຊັນ ແລະ ປະທັບຕາ**
**ລັດຖະມົນຕີວ່າການກະຊວງການຄ້າ**
**ພູມີ ທິບພະວອນ**